ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 575/ນຍ

ນະຄອນຫຼວງວຽງຈັນ, ວັນທີ 28.09. 2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກະຊວງພາຍໃນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນ ຂອງລັດຖະບານ ສະບັບເລກທີ 09/ສພຊ, ລົງວັນທີ 22 ມີນາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 296/ພນ, ລົງວັນທີ 21/09/ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງພາຍໃນ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານ ຂອງຂະແໜງພາຍໃນ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງພາຍໃນ ຂຽນເປັນຕົວອັກສອນຫຍໍ້ວ່າ: "ພນ" ແມ່ນໜຶ່ງໃນໂຄງປະກອບກົງຈັກ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບການພັດທະນາການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ວຽກງານສາມສ້າງ, ວຽກງານຊົນເຜົ່າ, ວຽກງານສາສະໜາ, ວຽກງານຄຸ້ມຄອງພົນລະເມືອງ, ຄຸ້ມຄອງລັດຖະກອນ, ຄຸ້ມຄອງພາລະກອນ, ຄຸ້ມຄອງຫົວໜ່ວຍວິຊາການທີ່ມີລາຍຮັບ, ການຄຸ້ມຄອງອົງການຈັດຕັ້ງສັງຄົມ, ວຽກງານສຳຫຼວດວັດແທກ, ວຽກງານແຜນທີ່, ວຽກງານເອກະສານ, ວຽກງານແຂ່ງຂັນ ແລະ ວຽກງານຍ້ອງຍໍ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກະຊວງພາຍໃນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ ແລະ ມະຕິ ຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ຄົ້ນຄວ້າ, ຫັນແນວທາງຂອງພັກ ແລະ ບັນດານະໂຍບາຍ ຂອງລັດຖະບານ ກ່ຽວກັບວຽກງານຂະແໜງພາຍໃນ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຢ່າງດີ;
3. ຄົ້ນຄວ້າສ້າງ, ປັບປຸງບັນດາກົດໝາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານພາຍໃນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
4. ຄົ້ນຄວ້າປັບປຸງໂຄງປະກອບກົງຈັກ ຂອງລັດຖະບານ, ບັນດາອົງການທີ່ຂຶ້ນກັບລັດຖະບານ, ຄົ້ນຄວ້າພາລະບົດບາດ, ໜ້າທີ ແລະ ຂອບເຂດສິດບັນດາການຈັດຕັ້ງ ແລະ ກົງຈັກຊ່ວຍວຽກ ຂອງບັນດາກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ກົງຈັກບໍລິຫານລັດຂັ້ນ ແຂວງ, ຂັ້ນເມືອງ; ຄົ້ນຄວ້າພິຈາລະນາຮັບຮອງ, ຕິດຕາມ, ຊຸກຍູ້, ແນະນຳ ແລະ ກວດກາ ການກຳນົດຕຳແໜ່ງງານ; ຊຸກຍູ້, ແນະນຳ, ກວດກາບັນດາກະຊວງ, ອົງການທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດລະບຽບການກ່ຽວກັບການບໍລິຫານລັດ, ການບໍລິການ ຂອງພາກລັດ, ລະບຽບການຄຸ້ມຄອງຕາປະທັບ; ຄຸ້ມຄອງ, ຕິດຕາມ ແລະ ກວດກາອົງການຈັດຕັ້ງສັງຄົມ ຕາມລະບຽບການທີ່ກຳນົດໄວ້;
5. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳການປົກຄອງ-ບໍລິຫານລັດ, ກວດກາບັນດານິຕິກຳ ຂອງຂະແໜງພາຍໃນ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
6. ຊຸກຍູ້ ແລະ ແນະນຳການປະຕິບັດການບໍລິຫານລັດຢູ່ຂັ້ນທ້ອງຖິ່ນ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ; ຄົ້ນຄວ້າກ່ຽວກັບການສ້າງຕັ້ງ, ການແຍກ, ການໂຮມ, ການກຳນົດເຂດເຊື່ອມຕໍ່ ແລະ ເຂດການປົກຄອງຂອງແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ ແລະ ນະຄອນ ເພື່ອນຳສະເໜີລັດຖະບານ ພິຈາລະນາ; ສົມທົບກັບພາກສ່ວນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການແກ້ໄຂບັນຫາທີ່ພົວພັນເຖິງເຂດເຊື່ອມຕໍ່ ແລະ ການແບ່ງເຂດການປົກຄອງ; ແນະນຳ, ຕິດຕາມ, ຊຸກຍູ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ໃນການຈັດຕັ້ງປະຕິບັດວຽກງານສາມສ້າງ ແລະ ກົນໄກບໍລິການຜ່ານປະຕູດຽວ;
7. ສ້າງກົນໄກ ແລະ ຄຸ້ມຄອງກ່ຽວກັບວຽກງານຄຸ້ມຄອງພົນລະເມືອງ ເປັນຕົ້ນ: ການຈັດສັນພົນລະເມືອງ, ຄຸ້ມຄອງການຍົກຍ້າຍ, ການຈົດທະບຽນການເກີດ, ການແຕ່ງດອງ, ການຢ່າຮ້າງ, ການເສຍຊີວິດ, ການປ່ຽນຊື່ ຫຼື ນາມສະກຸນ, ການຈົດທະບຽນສັນຊາດ ແລະ ເກັບກຳສະຖິຕິພົນລະເມືອງຕາມທີ່ໄດ້ກຳນົດໄວ້ໃນກົດຫມາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
8. ຊຸກຍູ້, ແນະນຳ, ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງວຽກງານຊົນເຜົ່າ ແລະ ສາສະໜາ ໃຫ້ຖືກຕ້ອງຕາມກົດຫມາຍ ແລະ ລະບຽບການ;
9. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳ ກ່ຽວກັບວຽກງານຄຸ້ມຄອງລັດຖະກອນ, ສ້າງກົນໄກລະບຽບການ ກ່ຽວກັບນະໂຍບາຍຕ່າງໆ ເພື່ອຮັບໃຊ້ວຽກງານຄຸ້ມຄອງລັດຖະກອນ;